ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ: 924 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 20 SEP 2012

# ຂໍ້ຕົກລົງ
## ວ່າດ້ວຍຄ່າສະມາຊິກ ແລະ ຄ່າບໍລິການຂໍ້ມູນຂ່າວສານສິນເຊື່ອ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ1999;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມ ການສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 122/ກຄທ, ລົງວັນທີ 30/07/2012.

### ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດລະບຽບຫຼັກການ ໃນການເກັບຄ່າສະມາຊິກ ແລະ ຄ່າບໍລິການຂໍ້ມູນຂ່າວສານສິນເຊື່ອຂອງ ສຂສ ເພື່ອເປັນບ່ອນອີງໃຫ້ແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ເປັນສະມາຊິກຂອງ ສຂສ ປະຕິບັດໃຫ້ມີຄວາມເປັນເອກະພາບ.

**ມາດຕາ 2. ຄ່າເຂົ້າເປັນສະມາຊິກ, ຄ່າບຳລຸງຮັກສາ ແລະ ຄ່າບໍລິການ**

2.1 ຄ່າເຂົ້າເປັນສະມາຊິກ

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ເຂົ້າເປັນສະມາຊິກຂອງ ສຂສ ຕ້ອງຈ່າຍຄ່າສະມາຊິກ 5.000.000 ກີບ (ຫ້າລ້ານກີບຖ້ວນ) ພາຍໃນ 7 ວັນ ພາຍຫຼັງທີ່ໄດ້ຮັບອະນຸຍາດ ຈາກ ທະນາຄານ ແຫ່ງ ສປປ ລາວ ໃຫ້ເຂົ້າເປັນສະມາຊິກ.



ທະນາຄານແຫ່ງ ສ.ປ.ປ. ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ໂທລະພິມ : 4304 BNL. VTE.LS ໂທລະສານ : (856)-21-21 3108 ໂທລະສັບ : 213109-213110 E-mail:Bol@pan-laos.net.la

**2.2 ຄ່າບຳລຸງຮັກສາ**

ສະມາຊິກ ຂອງ ສຂສ ຈະຕ້ອງຈ່າຍຄ່າບຳລຸງຮັກສາປະຈຳປີໃຫ້ແກ່ ທະນາຄານ ແຫ່ງ ສປປ ລາວ ປີລະ 2.000.000 ກີບ (ສອງລ້ານກີບຖ້ວນ).

**2.3 ຄ່າບໍລິການຂໍ້ມູນຂ່າວສານສິນເຊື່ອ**

2.3.1 ສະມາຊິກຂອງ ສຂສ ຈະຕ້ອງຈ່າຍຄ່າບໍລິການຂໍ້ມູນຂ່າວສານສິນເຊື່ອ ດັ່ງນີ້:

- ການເຂົ້າຄົ້ນຫາຂໍ້ມູນສິນເຊື່ອຂອງລູກຄ້າທີ່ມີຂໍ້ມູນໃນລະບົບ ຕ້ອງຈ່າຍຄ່າບໍລິການ 50.000 ກີບ (ຫ້າສິບພັນກີບຖ້ວນ) ຕໍ່ຄັ້ງຕໍ່ລາຍ;
- ການເຂົ້າຄົ້ນຫາຂໍ້ມູນສິນເຊື່ອຂອງລູກຄ້າໃນລະບົບ ແຕ່ບໍ່ພົບຂໍ້ມູນຂອງລູກຄ້າ ຕ້ອງຈ່າຍຄ່າບໍລິການ 20.000 ກີບ (ຊາວພັນກີບຖ້ວນ) ຕໍ່ຄັ້ງຕໍ່ລາຍ;

2.3.2 ບຸກຄົນ ຫຼື ນິຕິບຸກຄົນທີ່ບໍ່ແມ່ນ ສະມາຊິກ ຂອງ ສຂສ ທີ່ຕ້ອງການໃຫ້ ສຂສ ສະໜອງຂໍ້ມູນປະຫວັດການເຄື່ອນໄຫວສິນເຊື່ອ ຫຼື ຢັ້ງຢືນໜີ້ສິນຂອງຕົນເອງ ຕ້ອງຈ່າຍຄ່າບໍລິການ ດັ່ງນີ້:

- ສຳລັບບຸກຄົນ ຕ້ອງຈ່າຍຄ່າບໍລິການ 50.000 ກີບ (ຫ້າສິບພັນກີບຖ້ວນ) ຕໍ່ຄັ້ງຕໍ່ລາຍ;
- ສຳລັບນິຕິບຸກຄົນ ຕ້ອງຈ່າຍຄ່າບໍລິການ 100.000 ກີບ (ໜຶ່ງແສນກີບຖ້ວນ) ຕໍ່ຄັ້ງຕໍ່ລາຍ.

2.3.3 ບຸກຄົນ ຫຼື ນິຕິບຸກຄົນທີ່ບໍ່ແມ່ນ ສະມາຊິກ ຂອງ ສຂສ ຫາກຕ້ອງການຂໍ້ມູນຂ່າວສານສິນເຊື່ອຂອງບຸກຄົນ ຫຼື ນິຕິບຸກຄົນອື່ນ ຕ້ອງຈ່າຍຄ່າບໍລິການດັ່ງນີ້:

- ສຳລັບບຸກຄົນ ຕ້ອງຈ່າຍຄ່າບໍລິການ 80.000 ກີບ (ແປດສິບພັນກີບຖ້ວນ) ຕໍ່ຄັ້ງຕໍ່ລາຍ;
- ສຳລັບນິຕິບຸກຄົນ ຕ້ອງຈ່າຍຄ່າບໍລິການ 150.000 ກີບ (ໜຶ່ງຮ້ອຍຫ້າສິບພັນກີບຖ້ວນ) ຕໍ່ຄັ້ງຕໍ່ລາຍ.

**ມາດຕາ 3. ການຊຳລະຄ່າບຳລຸງຮັກສາ ແລະ ຄ່າບໍລິການ**

3.1 ສະມາຊິກ ຂອງ ສຂສ ຕ້ອງຊຳລະຄ່າບຳລຸງຮັກສາໃນແຕ່ລະປີ ຊ້າສຸດບໍ່ໃຫ້ກາຍ ວັນທີ 15 ມັງກອນຂອງແຕ່ລະປີ ໂດຍໂອນເງິນເຂົ້າບັນຊີລາຍຮັບຂອງ ທະນາຄານ ແຫ່ງ ສປປ ລາວ.

3.2 ສະມາຊິກ ຂອງ ສຂສ ຕ້ອງຊຳລະຄ່າບໍລິການ ໃນແຕ່ລະເດືອນຊ້າສຸດບໍ່ໃຫ້ກາຍ ວັນທີ 05 ຂອງເດືອນຕໍ່ມາ;

ກໍລະນີກາຍກໍານົດເວລາຊໍາລະທີ່ໄດ້ກໍານົດໃນຂໍ້ 3.1 ແລະ ຂໍ້3.2 ຂ້າງເທິງ ສຂສ ຈະຕັດເງິນຈາກບັນຊີເງິນຝາກກະແສລາຍວັນຂອງ ສະມາຊິກ ທີ່ຝາກໄວ້ຢູ່ ທະນາຄານແຫ່ງ ສປປ ລາວ ແລະ ຈະແຈ້ງໃຫ້ສະມາຊິກ ຊາບຕາມພາຍຫຼັງ.

## ມາດຕາ 4. ການຈັດຕັ້ງປະຕິບັດ

ມອບໃຫ້ ສຂສ ທະນາຄານແຫ່ງ ສປປ ລາວ, ສະມາຊິກ ຂອງ ສຂສ ແລະ ກົມກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

## ມາດຕາ 5. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ກໍານົດ, ກົດລະບຽບກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອທີ່ປະກາດໃຊ້ໃນເມື່ອກ່ອນ ຫາກຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສົມພາວ ໄພສິດ